# ຄວາມຮັກແລະອຸດົມການ

ໂດຍ: ສາວຫຼັກເຈັດ ເມັດນ້ຳຕານເມືອງສວັນ

ແດ່ຜູ້ທີ່ມີອຸດົມການອັນສູງສົ່ງທຸກໆທ່ານ ໂດຍສະເພາະ ລາວເກົ່າ

ນັ່ງມອງເບິ່ງຂອບຟ້າ          ນະພາສົ່ງສີໃສ
ສິ່ງໃດໃນໂລກາ          ຄ່າຄຸນຊິທຽມໄດ້
ໃຫ້ເອົາຫີນສີລາກ້າ          ຫຼືພູຜາມາຊາຊັ່ງ
ເອົາຫຍັງປຽບບໍ່ໄດ້          ນ້ຳໃຈກ້າຄ່າສູງ  ທ່ານເອີຍ

ຄວາມຮັກສົມມາດມຸ້ງ          ທັງສູງສົ່ງອຸດົມການ
ຄວາມຮັກຫວານທັງຫອມຫວນ          ສ່ວນປະສົມນັ້ນກົມກ້ຽວ
ນ້ຳເຜີ້ງຫນຽວໃນລີ້ນ          ກິນລົງບໍ່ຮູ້ອີ່ມ
ຊີມແລ້ວຫວານຊື່ນຊ້ອຍ          ຫົວໃຈຂ້ອຍກໍເຊັ່ນກັນ

ກຸຫຼາບບານເບັ່ງຊ້ອນ          ຊອນເຊື່ອງແຕ່ຄວາມງາມ
ມີຫນາມຄອຍປົກປັກ          ເຝົ້າຮັກສາຖນອມໄວ້
ງາມກີບໃບທັງກ້ານ          ຫວານໃຈຜູ້ຄອຍເບິ່ງ
ນ້ຳເຜີ້ງ  ກຸຫຼາບຊ້ອນ          ສະອອນແທ້ແຕ່ເພິ່ນຫວານ

ອຸດົມການທີ່ວ່ານັ້ນ          ປຽບເຫມືອນດັ່ງພູຜາ
ຫຼຽວມອງໄກສຸດຕາ          ຟາກຟ້າກວມທະເລໄວ້
ໃຈຂ້ອຍແສນຈະກວ້າງ          ສະມຸດຫຼວງບໍ່ກ້າຢັ່ງ
ເອົາຫຮັງປຸນປຽບໄດ້          ໃຈຂ້ອຍແມ່ນບໍ່ມີ   ທ່ານເອີຍ

ຄຸນຄ່າເຈົ້ານັ້ນບອກຊີ້          ບໍ່ມີສິ່ງໃນໂລກາ
ຫາຫຮັງໃດມາທຽມ          ທຽບນາງບໍ່ມີໄດ້
ຈະຂໍຍອມສລະໃຫ້          ກາຍແລະໃຈທີ່ສູງຄ່າ
ໃຫ້ສົມກັບຄຳວ່າ    ອຸດົມການແລະຮັກຫນັ້ນ ສອງຄຳນັ້ນແມ່ນຄູ່ກັນ  ທ່ານເອີຍ